# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 11 ກັນຍາ 2022 (09-11-2022)

---

## ຄວາມເຊື່ອສະແດງອອກໃນຄວາມສັມພັນຂອງທ່ານ

*ເມື່ອຕອນທີ່ທ່ານກຳລັງໃຫຍ່ຂື້ນແມ່ນໃຜທີ່ສາມາດລອດຈາກບັນຫາໄດ້ທຸກຢ່າງ?*

**ຈຸດສຳຄັນໃນບົດຮຽນ:** ຢ່າເລືອກໜ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອທ່ານ ສຕີບເຟັນ ເອ ສມິທ, ນັກພາກເກມກີລາ, ໄດ້ຖືກປະນາມຍ້ອນບໍ່ຮູ້ສຶກຕໍ່ຄຳເວົ້າແຕະຕ້ອງຈິດໃຈທີ່ໃຊ້ກ່ຽວກັບ ໂຊເຮ ໂອທານີ (Shohei Ohtani), ຜູ້ໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ຕີແລະຜູ້ແກວ່ງບານກັບທີມ ລອສແອນຈີລີສ ແອນໂຈ (Los Angeles Angels), ລາວບໍ່ໄດ້ຫາຂໍ້ແກ້ຕົວ. ແທນທີ່, ທ່ານສມິທເວົ້າວ່າ “ຂ້າພະເຈົ້າຜິດ, ຈົບ.” ຄຳເຫັນຂອງທ່ານສມິທບໍ່ໄດ້ກ່ຽວຫຍັງກັບການຫຼິ້ນຂອງ ໂອທານີ ໃນກີລາເບສບອລ; ຄຳກ່າວຫາຂອງເພິ່ນພົວພັນກັບຄວາມຈິງທີ່ວ່າ ໂອທານີ ເປັນຄົນຍີ່ປຸ່ນ. ຖານະທີ່ເປັນຄົນຜິວດຳ, ທ່ານສມິທບໍ່ເຄີຍເຂົ້າຂ້າງການຈຳແນກເຊື້ອຊາດແລະເປັນຜູ້ມັກຕໍ່ຕ້ານຄວາມຄິດແລະການປະພຶດກ່ຽວກັບການຈຳແນກເຊື້ອຊາດ. ເຖິງຢ່າງໃດກໍຕາມ, ເທື່ອນີ້, ເພິ່ນຕົກຢູ່ຝ່າຍຈຳເລີຍ. ທ່ານສມິທເວົ້າວ່າ ຄຳເວົ້າຂອງລາວ “ບໍ່ສາມາດໃຫ້ອະພັຍໄດ້,” ແລະຮັບຮູ້ວ່ານັ້ນແມ່ນລາວກຳລັງມີສ່ວນສືບຕໍ່ຢ່າງບໍ່ຈົບສິ້ນໃນການກຽດຊັງຄົນເອເຊັຽແລະຊຸມຊົນຄົນເອເຊັຽ-ອາເມຣິກັນ.” ທ່ານສມິທບໍ່ແມ່ນແຕ່ຜູ້ດຽວ. ການແບ່ງຊັ້ນວັນນະຮ້າຍແຮງກວ່າທີ່ມັນຄວນຈະເປັນທ່າມກາງຜູ້ເຫັນພ້ອມວ່າ “ທຸກຄົນໄດ້ຖືກສ້າງມາເທົ່າທຽມກັນ.” ບໍ່ວ່າຈະເປັນການຈຳແນກທາງດ້ານເຊື້ອຊາດ, ເສຖກິດ-ສັງຄົມ, ສາສນາ, ຫຼືການເມືອງກໍຕາມພວກເຮົາມັກປະຕິບັດຕໍ່ຄົນແຕກຕ່າງກັນຍ້ອນວ່າເຂົາຕ່າງຈາກເຮົາ ຫຼືບໍ່ສາມາດເຮັດບາງສິ່ງເພື່ອເຮົາ. ທ່ານຢາໂກໂບໄດ້ຊີ້ທາງທີ່ດີກວ່າພວກເຮົາຄວນປະຕິບັດຕໍ່ຜູ້ອື່ນເທົ່າທຽມກັນ.

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ຢາໂກໂບ 2:1-4.</u>

*1 ພີ່ນ້ອງທັງຫລາຍຂອງເຮົາເອີຍ, ໃນການທີ່ພວກເຈົ້າຖືພຣະສາສານາຝ່າຍພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ ຜູ້ຊົງສະງ່າຣາສີນັ້ນ*
*ຢ່າມີການເລືອກໜ້າຄົນ.*
*2 ສົມມຸດວ່າມີຄົນນຶ່ງຖືແຫວນຄຳແລະແຕ່ງຕົວງົດງາມ ເຂົ້າມາໃນທີ່ປະຊຸມຂອງພວກເຈົ້າ ແລະມີຄົນຈົນຜູ້ນຶ່ງ*
*ນຸ່ງເຄື່ອງເປື້ອນເປິເຂົ້າມາເໝືອນກັນ.*
*3 ຖ້າພວກເຈົ້າຈະສົນໃຈໃນຄົນທີ່ແຕ່ງຕົວງົດງາມນັ້ນ ແລະກ່າວທັກທາຍປາສັຍຮັບຕ້ອນຜູ້ນັ້ນວ່າ,*
*“ເຊີນນັ່ງບ່ອນເໝາະສົມນີ້ເທີນ” ແລະໃນຂນະດຽວນັ້ນເຈົ້າຈະກ່າວແກ່ຄົນຈົນນັ້ນວ່າ, “ໃຫ້ເຈົ້າຢືນຢູ່ຫັ້ນ” ຫລື “ໃຫ້ເຈົ້ານັ່ງທີ່ຕັ່ງຮອງຕີນ*
*ເຮົານີ້.”*
*4 ຖ້າເຮັດດັ່ງນັ້ນພວກເຈົ້າເປັນຜູ້ແບ່ງຊັ້ນວັນນະ ແລະກາຍເປັນຜູ້ຕັດສິນດ້ວຍຄວາມຄຶດອັນຊົ່ວ ບໍ່ແມ່ນຫລື.*

ໃນໂອກາດທີ່ຂ້າພະເຈົ້າທຳການປຶກສາເພື່ອຊ່ອຍໂບດແຫ່ງນຶ່ງ. ຂ້າພະເຈົ້າໄດ້ຂໍຮ້ອງໃຫ້ເພື່ອນໆໄປຢາມໂບດນັ້ນ ແລະບອກເຂົາລາຍງານຄວາມຮູ້ສຶກຂອງເຂົາ. ສອງສາມປີຜ່ານມາ, ໃນສອງຄົນມີປະສົບການຕ່າງກັນຫຼາຍໃນໂບດດຽວໃນມື້ດຽວກັນ. ຜູ້ນຶ່ງໄດ້ຮັບການຕ້ອນຮັບອົບອຸ່ນດີ, ໃຫ້ເຂົ້າຂອງບາງຢ່າງ, ແລະ ແນະນຳໃຫ້ສິດຍາພິບານໃຫຍ່ຮູ້ຈັກ. ອີກຜູ້ນຶ່ງຖືກປ່ອຍໃຫ້ນັ່ງຢູ່ຄົນດຽວໂດຍບໍ່ມີໃຜເຂົ້າມາທັກທາຍໂອ້ລົມເລີຍ. ນີ້ອາດເປັນການບັງເອີນ, ແຕ່ແຂກຜູ້ທີ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນເກີດຂຶ້ນຍ້ອນວ່າ ເປັນຊາດດຽວ

ກັນກັບຄົນສ່ວນຫຼາຍທີ່ເຂົ້າຮ່ວມໃນໂບດ. ອີກຜູ້ນຶ່ງບໍ່ແມ່ນຊາດດຽວກັນ. ໂບດນີ້ປາກົດວ່າມີການເລືອກໜ້າອີງຕາມຮູບຮ່າງພາຍນອກ, ຊຶ່ງເປັນການລະເມີດຫຼັກຄຳສອນໃນຂໍ້ພຣະຄຳເຫຼົ່ານີ້ຢ່າງແຈ່ມແຈ້ງ.

ຖ້າຫາກວ່າຄວາມເຊື່ອຂອງພວກເຮົາໄດ້ຊຶມເຂົ້າໃນຊີວິດຂອງພວກເຮົາ, ຈາກນັ້ນພວກເຮົາຈະບໍ່ມີການເລືອກໜ້າອີງຕາມຮູບຮ່າງພາຍນອກ. ການຈຳແນກເຊື້ອຊາດ ແລະການຈຳແນກອື່ນໆເປັນຄວາມບາບ. ມັນເກີດຂຶ້ນເມື່ອເວລາເຮົາບໍ່ໄດ້ຄອບຄອງຄວາມເຊື່ອຂອງເຮົາຢ່າງເຕັມທີ. ພວກເຮົາຈຳເປັນຕ້ອງຍຶດໝັ້ນໃນຄວາມເຊື່ອຂອງພວກເຮົາ ດັ່ງດຽວກັນກັບເຮົາຈັບຮາວຣົດເລື່ອນ (a racing roller coaster) ແໜ້ນໆ. ພວກເຮົາຄວນເກາະຕິດຄວາມເຊື່ອໃຫ້ໝັ້ນກວ່ານັ້ນອີກໃນເມື່ອເຮົາຖືກລໍ້ລວງໃຫ້ຈຳແນກ. ເປົ້າໝາຍບໍ່ແມ່ນການຍ້າຍການຈຳແນກຂອງເຮົາຈາກກຸ່ມນີ້ໄປຫາກຸ່ມນັ້ນ, ແຕ່ແມ່ນການຢຸດມັນທັງໝົດ. ການດຳເນີນຊີວິດໂດຍປາສຈາກການເລືອກໜ້າຕ້ອງການໃຫ້ພວກເຮົາຮັກສາຄວາມເຊື່ອຂອງເຮົາຂນະທີ່ພວກເຮົາສືບຕໍ່ສແວງຫາແລະເພິ່ງພາພຣະເຈົ້າ.

*ມີທາງໃດແດ່ຄົນມັກສະແດງອອກເຖິງການເລືອກໜ້າທຸກວັນນີ້?*

ໃນການສນັບສນູນຂໍ້ຄຳສັ່ງນີ້, ທ່ານຢາໂກໂບໄດ້ໃຫ້ຕົວຢ່າງຊຶ່ງຜູ້ອ່ານເບື້ອງຕົ້ນສາມາດສັມພັນໄດ້ງ່າຍ-ແລະມັນເປັນຕົວຢ່າງທີ່ແປໄດ້ດີຫຼາຍໃນປະເພນີໂບດຂອງເຮົາເອງ. ໃນກໍຣະນີຂອງທ່ານຢາໂກໂບ, ຜູ້ເຊື່ອໄດ້ມາເຕົ້າໂຮມເພື່ອກອງປະຊຸມ. ທ່ານຢາໂກໂບບໍ່ໄດ້ເວົ້າວ່າເປັນກອງປະຊຸມຕາມປົກກະຕິຂອງຜູ້ເຊື່ອຫຼືບໍ່, ແຕ່ ເພິ່ນຕ້ອງການເນັ້ນປະຕິກິຣິຍາຂອງຜູ້ເຂົ້າຮ່ວມປະຊຸມປະຈຳ.

ແຂກສອງຄົນໄດ້ເຂົ້າຮ່ວມກອງປະຊຸມ. ຮູບຮ່າງຂອງທັງສອງຍັງໃໝ່ສຳລັບກອງປະຊຸມ ເພາະວ່າ ເຂົາຕ້ອງການຄວາມຊ່ອຍເຫຼືອໃຫ້ຮູ້ວ່າເຂົາຄວນນັ່ງບ່ອນໃດ. ຄວາມໃໝ່ຂອງເຂົາບໍ່ແມ່ນພຽງແຕ່ສິ່ງທີ່ເຮັດໃຫ້ເຂົາໂດດເດັ່ນ. ທັງສອງບໍ່ສອດຄ່ອງກັບສະພາບເສຖກິດ-ສັງຄົມປົກກະຕິຂອງຄົນອື່ນໆ. ຜູ້ນຶ່ງເປັນຄົນຂ້ອນຂ້າງຮັ່ງມີ; ອີກຜູ້ນຶ່ງເປັນຄົນຈົນສິ້ນຫວັງ.

ຄວາມແຕກຕ່າງຣະຫວ່າງສອງຄົນນີ້ອາດປາກົດແຈ້ງ, ແຕ່ບໍ່ແມ່ນບ່ອນທີ່ເຮົາຕ້ອງສ່ອງສວ່າງໃສ່ຄວາມແຕກຕ່າງເຫຼົ່ານັ້ນ. ເມື່ອພວກເຮົາເຮັດເຊັ່ນນັ້ນ, ທ່ານຢາໂກໂບຖາມດ້ວຍຄວາມເວົ້າວ່າ *ຖ້າເຮັດດັ່ງນັ້ນພວກເຮົາ ບໍ່ໄດ້ "ກາຍເປັນຜູ້ຕັດສິນດ້ວຍຄວາມຄຶດອັນຊົ່ວຫລື" (ຂໍ້4).* ໃນເມື່ອພວກເຮົາຍຶດໝັ້ນໃນຄວາມເຊື່ອຂອງເຮົາໃນພຣະຄຣິດ, ພວກເຮົາວາງໃຈໃນພຣະອົງ, ຟັງຄວາມພຣະອົງແລະດຳເນີນຊີວິດເໝືອນພຣະອົງ. ພຣະເຈົ້າບໍ່ໄດ້ສະແດງຄວາມລຳອຽງ, ແລະພວກເຮົາກໍບໍ່ຄວນສະແດງຄວາມລຳອຽງເຊັ່ນດຽວກັນ.

## 2. <u>ຢາໂກໂບ 2:5-7</u>.

*[5]ພວກພີ່ນ້ອງທີ່ຮັກຂອງເຮົາເອີຍ, ພຣະເຈົ້າໄດ້ຊົງເລືອກຄົນຍາກຈົນໃນໂລກໃຫ້ເປັນຄົນຮັ່ງມີຝ່າຍຄວາມເຊື່ອ ແລະໃຫ້ເປັນຜູ້ຮັບແຜ່ນ-*
*ດິນ ຊຶ່ງພຣະອົງຊົງສັນຍາໄວ້ວ່າຈະປະທານໃຫ້ແກ່ຄົນທັງຫລາຍທີ່ຮັກພຣະອົງນັ້ນມາເປັນມໍລະດົກ ບໍ່ແມ່ນຫລື.[6]ແຕ່ພວກເຈົ້າໄດ້ປມາດ*
*ຄົນຈົນ ບໍ່ແມ່ນຄົນຮັ່ງມີນັ້ນຫລື ທີ່ກົດຂີ່ຂົ່ມເຫງພວກເຈົ້າ ບໍ່ແມ່ນເຂົາເຫລົ່ານັ້ນຫລື ທີ່ລາກດຶງພວກເຈົ້າຂຶ້ນສານ.[7]ບໍ່ແມ່ນເຂົາເຫລົ່ານັ້ນ*
*ຫລື ທີ່ໝິ່ນປມາດພຣະນາມອັນປະເສີດທີ່ໃຊ້ເອີ້ນພວກເຈົ້າ.*

ເວລາພວກເຮົາຈຳແນກຣະຫວ່າງຄົນ, ພວກເຮົາໄດ້ທຳການຕັດສິນທີ່ຮຽກວ່າພວກເຮົາບໍ່ມີສິດເຮັດແນວນັ້ນ. ໂດຍລົດຄຸນຄ່າບາງຄົນໃຫ້ການເຂົ້າຂ້າງອີກຄົນອື່ນ, ພວກເຮົາກໍໝິ່ນປມາດພຣະເຈົ້າ, ໝິ່ນປມາດທັສນະທີ່ພຣະອົງເຫັນເຂົາ ແລະ ໝິ່ນປມາດການທຳງານຂອງພຣະອົງຜ່ານເຂົາເໝືອນກັນ. ນັ້ນແມ່ນສິ່ງທີ່ຄົນກະທຳໃນຕົວຢ່າງຂອງທ່ານຢາໂກໂບ. ໂດຍພາຄົນຮັ່ງມີໄປນັ່ງບ່ອນມີກຽດແລະບໍ່ໄດ້ໃຫ້ກຽດຖານະດຽວກັນແກ່ຄົນທຸກ, ຄົນໄດ້ຍົກເລີກຄຸນຄ່າແລະຄຸນປໂຍດຂອງຄົນຍາກຈົນ.

ການຕັດສິນໃຈໃຫ້ກຽດຜູ້ນຶ່ງແລະດູຖູກຜູ້ອື່ນໂດຍອີງໃສ່ຮູບຮ່າງພາຍນອກບໍ່ແມ່ນພຽງແຕ່ປະຕິບັດຕໍ່ບຸກຄົນເທົ່ານັ້ນ. ແຕ່ກໍໜ້າເສັຽດາຍ, ສະມາຊິກບໍ່ພຽງແຕ່ລ່ວງລະເມີດຄວາມເຊື່ອທີ່ເຂົາຄວນຍຶດໝັ້ນເທົ່ານັ້ນ, ແຕ່ເຂົາໄດ້ດ້ອຍຄ່າຄົນຈົນຂນະທີ່ເຂົາເປັນຄົນຊົນຊັ້ນທີ່ມີຄ່າຜູ້ນຶ່ງ. ຖານະທາງດ້ານເສຖກິດ ຫຼືສັງຄົມບໍ່ແມ່ນສິ່ງທີ່ມີຄ່າຕໍ່ພຣະເຈົ້າ; ພຣະເຈົ້າຕ້ອງການໃຊ້ພວກເຮົາທຸກຄົນເພື່ອຈຸດປະສົງຂອງ

ຣາຊອານາຈັກຂອງພຣະອົງ, ແລະ ພຣະອົງຈະຈັດຫາຂອງປະທານທີ່ຈຳເປັນເພື່ອໃຊ້ໃນສິ່ງທີ່ພວກເຮົາຕ້ອງເຮັດ.

ທາງນຶ່ງທີ່ພຣະເຈົ້າໃຊ້ຄົນຈົນໃນໂລກແມ່ນເປັນຕົວຢ່າງໃນສິ່ງທີ່ໝາຍຄວາມວ່າ "ເປັນຄົນຮັ່ງມີຝ່າຍຄວາມເຊື່ອ ແລະໃຫ້ເປັນຜູ້ຮັບແຜ່ນດິນຊຶ່ງພຣະອົງຊົງສັນຍາວ່າຈະປະທານໃຫ້ແກ່ຄົນທັງຫລາຍທີ່ຮັກພຣະອົງນັ້ນມາເປັນມໍລະດົກ"(ຂໍ້ 5). ພຣະເຢຊູໄດ້ຊີ້ໃຫ້ສິດຂອງພຣະອົງເຫັນ ນຶ່ງຕົວຢ່າງແບບນີ້ໃນລູກາ 21:1-4. ຂນະທີ່ພຣະເຢຊູຊົງເຫັນຄົນທີ່ນຳເງິນມາຖວາຍໃນພຣະວິຫານ, ພຣະອົງໄດ້ເຫັນແມ່ໝ້າຍທຸກຍາກຄົນນຶ່ງເອົາເງິນຫຼຽນທອງແດງສອງອັດມາປ່ອນລົງໃນຕູ້ນັ້ນ. ພຣະອົງຈຶ່ງຊົງກ່າວວ່າ ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ແມ່ໝ້າຍຍາກຈົນຜູ້ນີ້ໄດ້ໃສ່ຫຼາຍກວ່າຄົນທັງປວງນັ້ນ. ເພາະວ່າຝ່າຍຄົນທັງປວງນັ້ນ ໄດ້ເອົາເງິນຈາກການເຫຼືອໃຊ້ຂອງເຂົາມາປ່ອນລົງ ແຕ່ຍິງຄົນນີ້ໄດ້ເອົາເງິນສຳລັບລ້ຽງຊີວິດຂອງຕົນ ຈາກຄວາມຂັດສົນທີ່ສຸດມາປ່ອນຈົນໝົດ(ຂໍ້ 4). ການຖວາຍຂອງນາງເຮັດໃຫ້ນາງບໍ່ເຫຼືອຫັຍງ ແຕ່ ຄວາມເຊື່ອ ແລະຄວາມວາງໃຈໃນພຣະເຈົ້າຂອງນາງ-ແລະໃນການນັ້ນນາງໄດ້ກາຍເປັນຄົນຮັ່ງມີ.

ມັນເປັນໄປບໍ່ໄດ້ທີ່ຈະຮູ້ວ່າມີຫັຍງໃນຫົວໃຈຂອງຄົນດ້ວຍການແນມເບິ່ງຮູບຮ່າງພາຍນອກ. ເມື່ອເຮົາເພັ່ງເບິ່ງຄົນຍາກຈົນພຽງເພາະເຂົານຸ່ງເຄື່ອງຂາດຫຼືເປື້ອນເປິ, ພວກເຮົາອາດບໍ່ສົນໃຈໃນຄວາມເຂັ້ມແຂງໃນດ້ານບົດບາດ ແລະຄວາມຮັ່ງມີຝ່າຍຄວາມເຊື່ອຂອງເຂົາ. ໃນທາງກັບກັນ, ເມື່ອເຮົາໃຫ້ກຽດຜູ້ໃດຜູ້ນຶ່ງເພາະເຂົານຸ່ງເຄື່ອງຢ່າງສລາດແລະສວມເຄື່ອງເອ້, ພວກເຮົາອາດຍົກຍໍຄົນທີ່ມີກິຣິຍາຕ່ຳສູ່ບ່ອນມີກຽດ, ຜູ້ເອົາລັດເອົາປຽບຄົນອື່ນແລະບໍ່ຄູ່ຄວນກັບການຍ້ອງຍໍພິເສດ. ໃນຕົວຢ່າງຂອງທ່ານຢາໂກໂບ, ຜູ້ເຊື່ອໄດ້ໃຫ້ກຽດຄົນທີ່ກົດຂີ່ຂົ່ມເຫັງແລະລາກເຂົາຂຶ້ນສານ. ພວກເຂົາອາດຮັ່ງມີສິ່ງຂອງຊົ່ວຄາວຝ່າຍໂລກ, ແຕ່ເຂົາຍາກຈົນສິ່ງສຳຄັນສຳລັບເຂົາແທ້ຈິງຄື: ຄວາມເຊື່ອໃນພຣະເຈົ້າ ແລະຄວາມຮັກຕໍ່ຜູ້ອື່ນ.

*ພວກເຮົາຈະຮັກສາວິນັຍຕົນເອງຢ່າງໃດເພື່ອບໍ່ໃຫ້ມີການເລືອກໜ້າ?*

## 3. ຢາໂກໂບ 2:8-13

8 *ຖ້າພວກເຈົ້າທັງຫຼາຍຂັບຕາມພຣະຣາຊບັນຍັດໂດຍຄົບຖ້ວນຕາມພຣະຄັມພີຂໍ້ທີ່ວ່າ, "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" ພວກເຈົ້າ*
*ກໍເຮັດດີຢູ່.*9 *ແຕ່ຖ້າເຈົ້າທັງຫລາຍເລືອກໜ້າຄົນພວກເຈົ້າກໍເຮັດຜິດ ແລະພຣະບັນຍັດຕັດສິນພວກເຈົ້າວ່າເປັນຄົນລ່ວງລະເມີດ.* 10 *ເພາະ-*
*ວ່າຖ້າບຸກຄົນໃດຖືຮັກສາພຣະບັນຍັດໄດ້ທັງໝົດແຕ່ຜິດຢູ່ຂໍ້ດຽວ ຜູ້ນັ້ນກໍກາຍເປັນຜູ້ຜິດພຣະບັນຍັດທັງໝົດ.* 11 *ເພາະວ່າພຣະອົງຜູ້ໄດ້ຊົງ*
*ກ່າວວ່າ, "ຢ່າຫລິ້ນຊູ້ສູ່ຜົວເມັຽທ່ານ" ກໍໄດ້ຊົງກ່າວອີກວ່າ, "ຢ່າຂ້າຄົນ" ດັ່ງນັ້ນຖ້າພວກເຈົ້າບໍ່ໄດ້ຫລິ້ນຊູ້ແຕ່ໄດ້ຂ້າຄົນເຈົ້າກໍກາຍເປັນຜູ້*
*ລ່ວງລະເມີດພຣະບັນຍັດ.* 12 *ເຈົ້າທັງຫລາຍຈົ່ງເວົ້າແລະເຮັດເໝືອນຢ່າງຄົນທີ່ຈວນຈະໄດ້ຮັບການພິພາກສາດ້ວຍກົດທີ່ໃຫ້ມີເສຣີພາບ.*
13 *ເພາະວ່າໃນການພິພາກສາ ພຣະເຈົ້າຈະບໍ່ຊົງສະແດງຄວາມເມດຕາຕໍ່ຜູ້ທີ່ບໍ່ໄດ້ສະແດງຄວາມເມດຕາ ສ່ວນຄວາມເມດຕາຍ່ອມ*
*ມີຊັຍຊະນະເໜືອການພິພາກສາ.*

ທ່ານຢາໂກໂບບໍ່ໄດ້ເຮັດໃຫ້ຜູ້ເຊື່ອທໍ້ໃຈຈາກການປະຕິບັດດີຕໍ່ຄົນຮັ່ງມີ, ແຕ່ເພິ່ນບໍ່ຢາກໃຫ້ຜູ້ເຊື່ອປະຕິບັດຕໍ່ຄົນຮັ່ງມີຕ່າງກັບຄົນອື່ນ. ພວກເຮົາສົມຄວນປະຕິບັດຕໍ່ທຸກຄົນເທົ່າທຽມກັນຢ່າງດີ-ຄົນຮັ່ງແລະຄົນຈົນ-ແລະໝາຍຄວາມວ່າເຮົາຮັກເຂົາທຸກຄົນ.

*ເປັນຫຍັງຄວາມເມດຕາຈຶ່ງສຳຄັນຫຼາຍໃນທາງການດຳເນີນຊີວິດໃນຄວາມເຊື່ອຂອງເຮົາ?*

ພຣະບັນຍັດໃນພຣະຄັມພີເດີມ, ຊາວຢິວໄດ້ຖືກສັ່ງໃຫ້ຮັກເພື່ອນບ້ານຂອງພວກເຂົາເຈົ້າແທນທີ່ຈະໜ່າຍຊັງຫຼືຫາທາງແກ້ແຄ້ນຜູ້ໃດຜູ້ນຶ່ງໃນຊຸມຊົນ (ເລວີ 19:18). ແຕ່ໜ້າເສັຽດາຍ, ຊາວຢິວເຄັ່ງຂັດແຕ່ນິຍາມຄຳວ່າເພື່ອນບ້ານຊຶ່ງນັບເອົາແຕ່ພີ່ນ້ອງຊາວຢິວຂອງເຂົາເທົ່ານັ້ນ, ແຕ່ ພຣະເຢຊູນຳໃຊ້ພຣະບັນຍັດຮັກ ຕໍ່ຜູ້ທີ່ຢູ່ນອກຊຸມຊົນເໝືອນກັນ. ເພື່ອນບ້ານບໍ່ແມ່ນພຽງແຕ່ຄົນທີ່ຄືເຮົາຫຼືຜູ້ທີ່ຢູ່ໃກ້ເຮົາເທົ່ານັ້ນ. ພຣະເຢຊູຂຍາຍຄຳນິຍາມເພື່ອນບ້ານນັບລວມທັງຜູ້ທີ່ຢູ່ນອກກຸ່ມຂອງເຮົາພ້ອມ, ແມ້ກະທັ້ງຜູ້ທີ່ຕໍ່ຕ້ານຜູ້ທີ່ເຮົາອາດຖືກທົດລອງໃຫ້ຍຶດຖືການຈຳແນກ.

ພວກເຮົາອ້າງເຖິງພຣະບັນຍັດຮັກ ຈົ່ງຮັກພຣະເຈົ້າ ແລະຮັກຄົນອື່ນເໝືອນຮັກຕົນເອງວ່າເປັນພຣະບັນຍັດຂໍ້ໃຫຍ່. ທ່ານຢາໂກໂບ

ເອີ້ນຂໍ້ຄຳສັ່ງໃຫ້ຮັກເພື່ອນບ້ານເໝືອນຮັກຕົນເອງວ່າ "ບັນຍັດຮັກ." ບັນຍັດຂອງຄວາມຮັກນຳໃຊ້ກັບທຸກໆຄົນສເມີ. ຖ້າຫາກວ່າມັນບໍ່ໄດ້ນຳໃຊ້ທົ່ວໄປ, ແລ້ວມັນກໍບໍ່ໄດ້ຖືກຖືຮັກສາໄວ້ຈັກໜ້ອຍເລີຍ.

ເວລາເຮົາສະແດງການເລືອກໜ້າຕໍ່ຜູ້ນຶ່ງກໍສົ່ງຜົນໃຫ້ດູຖູກຄົນອື່ນ, ພວກເຮົາກາຍເປັນບາບ-ພວກເຮົາເປັນຜູ້ລ່ວງລະເມີດພຣະບັນຍັດ.ຈຸດປະສົງການໂຕ້ຖຽງຂອງທ່ານຢາໂກໂບບໍ່ແມ່ນການກ່າວໂທດພວກເຮົາ, ແຕ່ ເພື່ອຮຽກຮ້ອງເຮົາໃຫ້ກັບໃຈໃໝ່. ພວກເຮົາຈະຖືກພິພາກສາຢ່າງດຽວກັນກັບວິທີທີ່ເຮົາປະຕິບັດຕໍ່ຄົນອື່ນ. ພວກເຮົາຄວນປະຕິບັດຕໍ່ກັນແລະກັນດ້ວຍຄວາມເມດຕາ. ພວກເຮົາຕ້ອງປະຕິບັດຕໍ່ທຸກຄົນດ້ວຍຄວາມເມດຕາ, ຄວາມຮັກ, ແລະການໃຫ້ກຽດ. ພວກເຮົາບໍ່ໄດ້ຂັບໄລ່ຜູ້ໃດໄປບ່ອນທີ່ບໍ່ໃຫ້ກຽດກັນ.

*ມີການປະຕິບັດໃດແດ່ໃນກຸ່ມເຮົາບໍ່ພຽງແຕ່ສາມາດຫຼີກເວັ້ນການເລືອກໜ້າເທົ່ານັ້ນແຕ່ຍັງສະແດງຄວາມຮັກຈິງຈັງອີກດ້ວຍ?*

## ນຳໃຊ້ໃນຊີວິດ

ທ່ານຈະດຳເນີນຊີວິດຕາມຄວາມຈິງຈາກຂໍ້ພຣະຄຳເຫຼົ່ານີ້ຢ່າງໃດ? ຈົ່ງເລືອກການນຳໃຊ້ໃນຊີວິດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງຕິດຕໍ່.** ທຳນຽມໃນກຸ່ມແລະກອງປະຊຸມຂອງທ່ານຈົ່ງທັກທາຍຜູ້ທີ່ເຮົາບໍ່ຮູ້ຈັກ. ຍິ້ມ. ແລະສົບຕາ. ຖາມຊື່ສຽງຂອງເຂົາ. ຈົ່ງຝຶກກົດ-ຫ້ານາທີ. ຫ້ານາທີກ່ອນຫຼືຫຼັງການຊຸມນຸມຂອງໂບດ, ຈົ່ງຊອກຫາຄົນທີ່ທ່ານບໍ່ຮູ້ຈັກດີປານໃດ ແລະໃຊ້ເວລາຫ້ານາທີໂອ້ລົມກັບເຂົາເຈົ້າ.

- **ຈົ່ງເຊື້ອເຊີນ.** ທ່ານຄົງມີເພື່ອນແລະຄົນຮູ້ຈັກຊຶ່ງຮູບຮ່າງພາຍນອກອາດ "ບໍ່ເໝາະ" ໃນກຸ່ມແລະໂບດຂອງທ່ານ. ຢ່າຄາດເດົາວ່າເຂົາຈະບໍ່ເໝາະໃນກຸ່ມຂອງທ່ານ. ເຊີນເຂົາມານຳທ່ານ. ຈົ່ງສະແດງຄວາມຮັກຂອງພຣະຄຣິດຕໍ່ເຂົາ. ຊ່ວຍກັນສ້າງສະພານ.

- **ຊ່ວຍບາງຄົນໃຫ້ພົ້ນທຸກ.** ຈົ່ງຊອກຫາທາງຊ່ວຍບຸກຄົນທີ່ມີຄວາມຈຳເປັນ. ໃນເມື່ອທ່ານບໍ່ສາມາດເຮັດໃຫ້ຄວາມຈົນໝົດໄປທັງໝົດ, ທ່ານສາມາດຊ່ວຍບາງຄົນທີ່ມີຄວາມຕ້ອງການແລະເຮົາເຮັດຄວາມແຕກຕ່າງເພື່ອເຂົາ.

ພຣະເຈົ້າສ້າງເຮົາຕ່າງກັນເພື່ອຈຸດປະສົງໃດນຶ່ງ. ຖ້າພວກເຮົາສາມາດຮຽນຮູ້ຄວາມສະງ່າງາມໃນການອອກແບບຂອງພຣະເຈົ້າແລະແຜນການສຳລັບແຕ່ລະບຸກຄົນ, ພວກເຮົາຈະປະຕິບັດຕໍ່ທຸກໆຄົນໂດຍບໍ່ມີການຈຳແນກ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**